## ຕົວຢ່າງວຽກຂອງພວກເຮົາ

- ຢຸດການຕັດງົບປະມານຕໍ່ກັບການ ແລເບິ່ງແຍງເຊິ່ງຜູ້ພິການຫຼາຍພັນຄົນ ອີງອາໄສໃສ່: ການບໍລິການສຸຂະພາບ ຕອນກາງເວັນສໍາລັບຜູ້ໃຫຍ່ ແລະ ການບໍລິການຊ່ວຍເຫຼືອຢູ່ເຮືອນ
- ຝຶກອົບຮົມບຸກຄົນທີ່ອາໄສຢູ່ໃນສະຖານ ສົງເຄາະກ່ຽວກັບສິດທິຂອງເຂົາເຈົ້າ ໃນການໄດ້ອາໄສຢູ່ໃນຊຸມຊົນ; ແລະ ຊ່ວຍເຫຼືອບາງຄົນຊອກຫາບ່ອນຢູ່ອາໄສ
- ຊ່ວຍຈັດງານ Capitol Action Day ບ່ອນທີ່ໄວໜຸ່ມ ແລະ ຜູ້ສົ່ງເສີມສະໜັບ ສະໜູນຫຼາຍຮ້ອຍຄົນ ພົບປະກັບຜູ້ອອກ ກົດໝາຍກ່ຽວກັບບັນຫາຄວາມພິການ
- ຮັບປະກັນໃຫ້ຜູ້ຢູ່ອາໄສຂອງໂຮງໝໍລັດ ສາມາດຮັກສາສິ່ງຂອງສ່ວນຕົວຂອງເຂົາເຈົ້າ
- ຊ່ວຍເດັກນ້ອຍ ແລະຜູ້ໃຫຍ່ຫຼາຍພັນຄົນ ທີ່ມີຄວາມພິການດ້ານພັດທະນາການ ໃຫ້ໄດ້ຮັບການບໍລິການ
- ຊ່ວຍສົ່ງຕໍ່ໃບບິນເພື່ອປັບປຸງການລາຍງານ ການທາລຸນຂົ່ມເຫັງຫາຕໍາຫຼວດ
- ປົກປ້ອງສິດທິໃນການລົງຄະແນນສຽງ ເລືອກຕັ້ງສໍາລັບບຸກຄົນທີ່ຢູ່ໃນໂຮງໝໍລັດ ແລະ ສະຖານດູແລນັກຮົບເກົ່າ
- ຕໍ່ສູ້ກັບຄວາມເຊື່ອມເສຍ ແລະ ການເລືອກປະຕິບັດ ໂດຍການສຶກສາອົບ ຮົມຜູ້ຄົນກ່ຽວກັບສິດທິຂອງເຂົາເຈົ້າ ແລະ ການພັດທະນາໂຄງການຕ່າງໆ ທີ່ແກ້ໄຂການເລືອກປະຕິບັດໃນກົດໝາຍ ລັດຄາລິຟໍເນັຍ



## ວິທີຕິດຕໍ່ຫາ DRC

**ເບີໂທຟຣີທົ່ວລັດ**
**1-800-776-5746 (ສັດທະ)**
**1-800-719-5798 (TTY)**

ເຂົ້າເວັບໄຊ www.disabilityrightsca.org ຫຼື www.disabilityrightsca.org/espanol ເພື່ອດາວໂຫຼດສິ່ງສີພິມຕ່າງໆ, ໄດ້ຮັບຈົດໝາຍ ຂ່າວທາງອີເລັກໂທຣນິກປະຈໍາອາທິດໂດຍ ບໍ່ເສຍຄ່າ, ແລະ ອ່ານກ່ຽວກັບກໍລະນີ ແລະ ເລື່ອງເລົ່າຄວາມສໍາເລັດຂອງພວກເຮົາ.

ເຊື່ອມຕໍ່ກັບພວກເຮົາເທິງ Facebook ຫຼື Twitter.

ຫຼື ເທິງ Youtube @ DisabilityRightsCA

Disability Rights California, ເຊິ່ງແມ່ນອົງ ການຈັດຕັ້ງຕາມປະມວນກົດໝາຍຂໍ້ 501(c)(3), ໄດ້ຮັບທຶນຈາກຫຼາກຫຼາຍແຫຼ່ງທຶນ, ສໍາລັບບັນ ຊີລາຍຊື່ຄົບຖ້ວນຂອງຜູ້ໃຫ້ທຶນ, ໃຫ້ເຂົ້າເບິ່ງ http://www.disabilityrightsca.org/Documents/ListofGrantsAndContracts.html

Disability Rights California
*California's Protection & Advocacy System*

*ພາລະກິດ:*
*ພວກເຮົາສົ່ງເສີມສະໜັບສະໜູນ, ໃຫ້ການສຶກສາອົບຮົມ, ສືບສວນສອບສວນ, ແລະ ດໍາເນີນຄະດີ ເພື່ອສົ່ງເສີມ ແລະ ປົກປ້ອງສິດທິ ຂອງຜູ້ພິການຊາວລັດຄາລິຟໍເນັຍ.*



*"Untitled"* *ໂດຍ Mia Brown*
*ຈັດສະແດງຢູ່ www.niadart.com*

## ກ່ຽວກັບພວກເຮົາ

ທຸກໆເດືອນ, ປະມານ 2,000 ຄົນ ຮ້ອງຂໍຄວາມຊ່ວຍເຫຼືອຈາກ DRC ໃນການໄດ້ຮັບສິດທິ ແລະການບໍລິການ.

ບາງຄົນຕ້ອງການຄວາມຊ່ວຍເຫຼືອໃນການໄດ້ຮັບການສຶກສາ ຫຼື ການຍົກລະດັບທັກສະການເຮັດວຽກ. ຫຼາຍປະເດັນອື່ນກໍ່ເປີດເຜີຍບັນຫາໃນທົ່ວລັດ ແລະ ຮຽກຮ້ອງໃຫ້ມີຄວາມພະຍາຍາມຢ່າງຕໍ່ເນື່ອງຂອງພວກເຮົາເປັນເວລາຫຼາຍທົດສະວັດ: ການຕັດງົບປະມານຂອງການບໍລິການທີ່ສຳຄັນຂອງລັດຖະບານ... ການຂາດການບໍລິການທີ່ອີງໃສ່ເຮືອນ ແລະຊຸມຊົນ... ນະໂຍບາຍທີ່ເອື້ອອຳນວຍໃຫ້ແກ່ການບໍລິການທີ່ແພງກວ່າ, ວິທີແກ້ໄຂທີ່ອີງໃສ່ສະຖານສົງເຄາະ... ການຂົ່ມເຫັງ ແລະ ການລະເລີຍຢູ່ທຸກໆບ່ອນທີ່ຄົນພິການອາໄສຢູ່... ການຂາດບ່ອນຢູ່ອາໄສທີ່ສາມາດເຂົ້າເຖິງໄດ້, ຊື້ໄດ້... ແລະ ຄວາມພະຍາຍາມໃນການທັບມ້າງກົດໝາຍທີ່ຮັບປະກັນການເຂົ້າເຖິງຢ່າງເທົ່າທຽມກັນຕໍ່ກັບທຸລະກິດ ແລະ ການບໍລິການພາກລັດ. ກວດເບິ່ງແຜນການສົ່ງເສີມສະໜັບສະໜູນລ້າສຸດ ແລະ ຮຽນຮູ້ກ່ຽວກັບໜ້າວຽກຂອງພວກເຮົາທີ່: www.disabilityrightsca.org.

## ສະໜັບສະໜູນພວກເຮົາ

ຊ່ວຍສະໜັບສະໜູນວຽກຂອງ
Disability Rights California
ແລະ ເຮັດການບໍລິຈາກໃນມື້ນີ້ທີ່:
http://www.disabilityrightsca.org/about/donate.htm.




## 10 ການບໍລິການບໍ່ເສຍຄ່າ ສຳລັບຄົນພິການ

1. ສະໜອງຂໍ້ມູນກ່ຽວກັບສິດທິທາງກົດໝາຍ, ສິດທິຂອງປະຊາຊົນ ແລະ ສິດທິດ້ານການບໍລິການຂອງທ່ານ
2. ສະໜອງການຊ່ວຍເຫຼືອດ້ານວິຊາການ, ການຝຶກອົບຮົມ, ສິ່ງພິມເຜີຍແຜ່ ແລະ ການສະໜັບສະໜູນສົ່ງເສີມ
3. ສົ່ງເສີມສະໜັບສະໜູນເພື່ອຮັບປະກັນວ່າກົດໝາຍໃຫ້ປະໂຫຍດແກ່ຜູ້ພິການຊາວລັດຄາລິຟໍເນັຍ
4. ສືບສວນການທາລຸນຂົ່ມເຫັງ ແລະ ການລະເລີຍ ໃນສະຖານດູແລຕ່າງໆ
5. ອອກໄປໃຫ້ບໍລິການນອກສະຖານທີ່ແກ່ກຸ່ມຊົນເຜົ່າ ແລະຜູ້ພິການທີ່ບໍ່ໄດ້ຮັບການບໍລິການຢ່າງທົ່ວເຖິງ
6. ໃຫ້ການບໍລິການສົ່ງເສີມສະໜັບສະໜູນເພື່ອນໄວດຽວກັນສຳລັບຜູ້ທີ່ພິການທາງຈິດ ຫຼືທາງພັດທະນາການ
7. ສະໜອງການຝຶກອົບຮົມກ່ຽວກັບການສົ່ງເສີມສິດທິຂອງຜູ້ປ່ວຍໃຫ້ແກ່ນັກສົ່ງເສີມສິດທິຜູ້ປ່ວຍຂອງເຂດປົກຄອງ
8. ສົ່ງເສີມສະໜັບສະໜູນຜູ້ທີ່ພິການທາງພັດທະນາການ ຜູ້ທີ່ເປັນຜູ້ຊົມໃຊ້ຂອງສູນດູແລລະດັບພາກພື້ນ
9. ດຳເນີນການຟ້ອງຄະດີໃນນາມລວມກຸ່ມ ແລະ ເຮັດໜ້າທີ່ເປັນ "ເພື່ອນສານ" ໃນບັນດາຄະດີທີ່ກ່ຽວຂ້ອງກັບຄົນພິການ
10. ໃຫ້ການຊ່ວຍເຫຼືອດ້ານກົດໝາຍສຳລັບບັນຫາທີ່ກ່ຽວຂ້ອງກັບຄົນພິການ



*"Storyteller" ໂດຍ Shirley How*
*ຈັດສະແດງຢູ່ www.niadart.com*

## ບັນຫາທີ່ພວກເຮົາບໍ່ສາມາດຊ່ວຍເຫຼືອໄດ້:

– ການເປັນຕົວແທນໂດຍກົງໃນກົດໝາຍອາຍາ, ກົດໝາຍຄອບຄົວ, ການລົ້ມລະລາຍ ຫຼືການຟ້ອງຂັບໄລ່
– ການຟ້ອງຄະດີການບາດເຈັບສ່ວນບຸກຄົນ
– ການປະກອບແບບຟອມຮ້ອງຂໍປະກັນສັງຄົມ
– ການໄດ້ຮັບຄວາມຄຸ້ມຄອງ ຫຼືການພິທັກປົກປ້ອງ